# ຍຸດທະສາດ ຊີວະນາໆພັນກະສິກຳຂອງແຂວງ




## ເປົ້າໝາຍ:

## ການອະນຸລັກຊີວະນາໆ ພັນກະສິກຳ ທາງດ້ານຈຳນວນ ແລະ ຄຸນນະພາບ

**ຍຸດທະສາດທີ 01**

ປົກປັກຮັກສາ ແລະ ນຳໃຊ້ ຊີວະນາໆພັນແບບຍືນຍົງ ຂອງແຂວງ ຊຶ່ງລວມເອົາ ບັນດາລະບົບນິເວດ ແລະ ຊະນິດພັນ ທີ່ມີຄຸນຄ່າທາງ ເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ (ມີທັງຫມົດ 05 ແຜນງານ).

ແຜນງານ 1.1: ການປົກປັກຮັກສາ ລະບົບນິເວດປ່າໄມ້
ແຜນງານ 1.2: ການປົກປັກຮັກສາ ລະບົບນິເວດດິນບໍລິເວນນ້ຳ
ແຜນງານ 1.3: ການປົກປັກຮັກສາ ລະບົບນິເວດກະສິກຳ
ແຜນງານ 1.4: ການປົກປັກຮັກສາ ລະບົບນິເວດຕົວເມືອງ
ແຜນງານ 1.5: ການອະນຸລັກ ແນວພັນປາພື້ນເມືອງ

**ຍຸດທະສາດທີ 02**

ສັງລວມເອົາຄຸນປະໂຫຍດ ແລະ ການອະນຸລັກຊີວະນາໆພັນກະສິກຳແບບຍືນຍົງເຂົ້າໃນຂະບວນການ ກຳນົດແຜນພັດທະນາ ເສດຖະກິດ-ສັງຄົມ ຂອງແຂວງ (ມີທັງຫມົດ 02 ແຜນງານ)

ແຜນງານ 2.1: ເຊື່ອມສານຍຸດທະສາດຊີວະນາໆພັນກະສິກຳ ເຂົ້າໃນແຜນພັດທະນາຂະແຫນງການ ຂອງທ້ອງຖິ່ນ

ແຜນງານ 2.2: ສົ່ງເສີມການລົງທຶນ ທີ່ເອົາໃຈໃສ່ ຕໍ່ສິ່ງແວດລ້ອມ

**ຍຸດທະສາດທີ 03**

ສັງລວມເອົາ ພູມປັນຍາ ແລະ ລະບຽບການທ້ອງຖິ່ນ ເພື່ອເປັນບ່ອນອີງ ໃຫ້ແກ່ ການກຳນົດນະໂຍບາຍພັດທະນາເສດຖະກິດ-ສັງຄົມຂອງແຂວງ (ມີທັງຫມົດ 01 ແຜນງານ)

ແຜນງານ 3.1: ການພັດທະນາຄວາມຮູ້ ແລະ ພູມປັນຍາທ້ອງຖິ່ນ

**ຍຸດທະສາດທີ 04**

ດຳເນີນການໂຄສະນາ ເຜີຍແຜ່, ການສຶກສາ ແລະ ປູກຈິດສຳນຶກມວນຊົນ ຢ່າງກ້ວາງຂວາງ ກ່ຽວກັບ ຄຸນຄ່າ ການອະນຸລັກ ແລະ ນຳໃຊ້ ຊີວະນາໆພັນກະສິກຳແບບຍືນຍົງ (ມີທັງຫມົດ 03 ແຜນງານ)

ແຜນງານ 4.1: ການຝຶກອົບຮົມ
ແຜນງານ 4.2: ໂຄສະນາ ແລະ ປູກຈິດສຳນຶກມວນຊົນ
ແຜນງານ 4.3: ການສຶກສາໃນລະບົບ ແລະ ນອກລະບົບ

**ຍຸດທະສາດທີ 05**

ການຈັດຕັ້ງປະຕິບັດ ຍຸດທະສາດຊີວະນາໆພັນກະສິກຳ ຂອງ ແຂວງ (ມີທັງຫມົດ 03 ແຜນງານ)

ແຜນງານ 5.1: ສ້າງບົດລາຍງານ ການຈັດຕັ້ງປະຕິບັດ ຍຸດທະສາດຊີວະນາໆພັນກະສິກຳຂອງແຂວງ
ແຜນງານ 5.2: ສ້າງກົນໄກປະສານງານປະຕິບັດ ຍຸດທະສາດຊີວະນາໆພັນກະສິກຳຂອງແຂວງ
ແຜນງານ 5.3: ການລະດົມທຶນຮອນ